

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


| | | |
|---|---|---|
| I. | ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ | 01 - 04 |
| II. | ການເຄື່ອນໄຫວຂອງ ການນຳຂັ້ນສູງ | 05 - 08 |
| III. | ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ | 09 - 13 |


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນສິງຫາ 2026**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 01 ສິງຫາ 2026, ກະຊວງການຕ່າງປະເທດ ໄດ້ດຳເນີນກອງປະຊຸມການທູດ ຄັ້ງທີ 33 ພາຍໃຕ້ຫົວຂໍ້ "ເສີມຂະຫຍາຍບົດບາດນຳໜ້າ ແລະ ປະຕິບັດໜ້າທີ່ສຳຄັນຂອງ ການພົວພັນຕ່າງປະເທດຫວຽດນາມ ໃນສັງກາດໃໝ່" ທີ່ຫໍປະຊຸມສາກົນ, ນະຄອນຫຼວງຮ່າໂນ້ຍ ພາຍໃຕ້ການເປັນປະທານຮ່ວມຂອງ ສະຫາຍ ພົນເອກ ຟານ ວັນ ຢາງ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ; ສະຫາຍ ພົນເອກ ເລືອງ ຕາມ ກວາງ, ກຳມະການກົມການເມືອງສູນກາງພັກ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ສະຫາຍ ເລ ຮ່ວາຍ ຈຸງ, ກຳມະການກົມການເມືອງ, ລັດຖະມົນຕີກະຊວງການຕ່າງປະເທດ, ພ້ອມທັງ ບັນດາເອກອັກຄະລັດຖະທູດ ແລະ ບັນດາຫົວໜ້າອົງການຜູ້ຕາງໜ້າຫວຽດນາມ ປະຈຳຢູ່ຕ່າງປະເທດ ກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດດັ່ງກ່າວ, ສະຫາຍ ໂຕ ເລີມ, ເລຂາທິການໃຫຍ່, ປະທານປະເທດ ໄດ້ມີຄຳເຫັນຊີ້ນຳວ່າ ປີນີ້ເປັນປີທຳອິດໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກຢ່າງຮອບດ້ານ, ຊຶ່ງຢູ່ໃນໄລຍະທີ່ປະເທດພວມເລັ່ງປັບປຸງລະບົບການໃຫ້ສົມບູນ ແລະ ຫັນປ່ຽນຮູບແບບການຂະຫຍາຍຕົວ; ສະນັ້ນ, ຫົວຂໍ້ກອງປະຊຸມການທູດຄັ້ງນີ້ ແມ່ນມີຄວາມເໝາະສົມ ແລະ ສາມາດນຳໄປໝູນໃຊ້ເຂົ້າສູ່ໜ້າວຽກຕົວຈິງ ແລະ ຍັງເນັ້ນໜັກວ່າ ບັນດາຫົວໜ້າອົງການຜູ້ຕາງໜ້າຂອງ ສສ ຫວຽດນາມ ປະຈຳຢູ່ຕ່າງປະເທດ ຕ້ອງມີບົດບາດເປັນຜູ້ຕາງໜ້າຮອບດ້ານຂອງຊາດ, ບໍ່ພຽງແຕ່ຂະແໜງການທູດ, ເພີ່ມທະວີການຄົ້ນຄວ້າຍຸດທະສາດ, ກຳແໜ້ນສະພາບການ, ເປັນເຈົ້າການ ແລະ ມີຫົວຄິດປະດິດສ້າງໃນການ ຈັດຕັ້ງປະຕິບັດໜ້າທີ່ ບົນພື້ນຖານຍຶດໝັ້ນແນວທາງຂອງພັກ ແລະ ກົດໝາຍຂອງລັດ; ສະຫາຍ ໂຕ ເລີມ ໄດ້ສະເໜີໃຫ້ບັນດາຫົວໜ້າອົງການຜູ້ຕາງໜ້າຫວຽດນາມ ຕ້ອງກຳນົດເອົາວຽກງານການທູດຮັບໃຊ້ການພັດທະນາເປັນຈຸດໃຈກາງ, ຕ້ອງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XIV ຂອງພັກ, ບັນດາມະຕິຂອງຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ພິເສດແມ່ນບັນດາມະຕິສະເພາະ ຄື: ມະຕິ ເລກທີ 10-NQ/TW ຂອງກົມການເມືອງສູນກາງພັກ ວ່າດ້ວຍການພັດທະນາເສດຖະກິດ ທີ່ມີທຶນຕ່າງປະເທດ ແລະ ບັນດາອົງການຜູ້ຕາງໜ້າ, ຕ້ອງຖືສຳຄັນວຽກງານປົກປ້ອງພົນລະເມືອງຫວຽດນາມ ທີ່ອາໄສຢູ່ຕ່າງປະເທດ, ເປັນກຳລັງຫຼັກແຫຼ່ງອັນສຳຄັນ ກ່ຽວກັບພູມປັນຍາ, ທຶນ, ເຕັກໂນໂລຊີ, ການເຊື່ອມໂຍງຖັນແຖວປັນຍາຊົນ, ຊ່ຽວຊານ, ນັກທຸລະກິດຫວຽດນາມ ກັບໂຄງການພັດທະນາພາຍໃນປະເທດ; ສ້າງເຄືອຂ່າຍຊ່ຽວຊານຫວຽດນາມ ໃນບັນດາຂະແໜງເຕັກໂນໂລຊີຫຼັກແຫຼ່ງ; ສົມທົບຢ່າງແໜ້ນແຟ້ນກັບອົງການພາຍໃນປະເທດ ໃນວຽກງານປົກປ້ອງພົນລະເມືອງ ແລະ ເປັນເຈົ້າການເຕືອນໄພລ່ວງໜ້າ ເພື່ອສະກັດກັ້ນແຕ່ຫົວທີ.

ພ້ອມດຽວກັນ, ສະຫາຍ ເລ ຮ່ວາຍ ຈຸງ ໄດ້ຕາງໜ້າໃຫ້ກະຊວງການຕ່າງປະເທດ ແລະ ບັນດາຫົວໜ້າອົງການຜູ້ຕາງໜ້າຫວຽດນາມ ປະຈຳຢູ່ຕ່າງປະເທດ ຮັບເອົາທິດຊີ້ນຳ ແລະ ຢືນຢັນວ່າ ຈະພະຍາຍາມສຸດຄວາມສາມາດ ເພື່ອຜັນຂະຫຍາຍການຊີ້ນຳ ໃຫ້ກາຍເປັນໜາກຜົນລະອຽດ, ເປັນຈິງ ແລະ ຮັບໃຊ້ໃຫ້ແກ່ພາລະກິດຂອງການພັດທະນາປະເທດໃນສັງກາດໃໝ່, ພ້ອມທັງ ຮຽກຮ້ອງໃຫ້ບັນດາກົມຂອງກະຊວງການຕ່າງປະເທດ ຈັດຕັ້ງປະຕິບັດແນວທາງຂອງພັກ-ລັດ ຢ່າງລະອຽດ, ປະຕິບັດກົນໄກການປະສານງານທີ່ມີຢູ່ແລ້ວ ໃຫ້ມີປະສິດທິພາບດ້ວຍຄວາມຮັບຜິດຊອບ, ເສີມສ້າງການແລກປ່ຽນຂໍ້ມູນ, ເສີມຂະຫຍາຍການຄົ້ນຄວ້າ ແລະ ການຄາດຄະເນຍຸດທະສາດ, ປັບປຸງການປະສານງານໃນກິດຈະກຳພາຍນອກ ແລະ ຂະຫຍາຍໂຄງການຝຶກອົບຮົມ ເພື່ອຕອບສະໜອງຄວາມຕ້ອງການຂອງວຽກງານ ການປ້ອງກັນປະເທດ, ຄວາມໝັ້ນຄົງ ແລະ ການຕ່າງປະເທດ ໃນສັງກາດໃໝ່ຂອງການພັດທະນາ.

#### 2) ພັກກອມມູນິດຈີນ

ວັນທີ 31 ກໍລະກົດ 2026, ກະຊວງການຕ່າງປະເທດ ສປ ຈີນ ໄດ້ອອກຖະແຫຼງການ ກ່ຽວກັບກຳລະນີ ຟີລິບປິນກຳນົດ "ເສັ້ນພື້ນຖານນ່ານນ້ຳທະເລ" ຢູ່ເຂດເກາະຮວງຢຽນ ວ່າ: ເປັນການລ່ວງລະເມີດອະທິປະໄຕຜືນແຜ່ນດິນອັນຄົບຖ້ວນຂອງ ສປ ຈີນ ຢ່າງໜັກໜ່ວງ ທັງເປັນການລະເມີດກົດໝາຍສາກົນ ເຊັ່ນ: "ກົດບັດອົງການສະຫະປະຊາຊາດ" ແລະ "ສົນທິສັນຍາ ວ່າດ້ວຍມະຫາສະໝຸດຂອງອົງການສະຫະປະຊາຊາດ". ສປ ຈີນ ເດັດດ່ຽວຄັດຄ້ານ ແລະ ບໍ່ຮັບເອົາ

ເລື່ອງນີ້ຢ່າງເດັດຂາດ. ເກາະຣວງຢຽນ ແມ່ນພື້ນແຜ່ນດິນຂອງຈີນມາແຕ່ປະຫວັດສາດ. ຟີລິບປິນ ໄດ້ເກາະຜິດ ແລະ ເຄື່ອນໄຫວຢູ່ເຂດເກາະຣວງຢຽນເລື້ອຍໆ ເຮັດໃຫ້ສະຖານະການທາງທະເລເຄັ່ງຕຶງຂຶ້ນ, ທຳລາຍສັນຕິພາບ ແລະ ສະຖຽນລະພາບຂອງທະເລຈີນໃຕ້. ຈີນ ຮຽກຮ້ອງໃຫ້ ຟີລິບປິນ ຈົ່ງເຄົາລົບອະທິປະໄຕພື້ນແຜ່ນດິນອັນຄົບຖ້ວນ ແລະ ສິດຜົນປະໂຫຍດດ້ານມະຫາສະໝຸດຂອງຈີນ ຢ່າງແທ້ຈິງ, ຢຸດຕິການກະທຳທີ່ເປັນການເກາະຜິດ, ຖ້າບໍ່ດັ່ງນັ້ນ ສປ ຈີນ ຈະໃຊ້ມາດຕະການຕອບໂຕ້ຢ່າງເດັດຂາດ.

### 3) ພັກແຮງງານເກົາຫຼີ

ວັນທີ 02 ສິງຫາ 2026, ສປປ ເກົາຫຼີ ໄດ້ອອກຖະແຫຼງການກ່າວປະນາມ ການຊ້ອມຮົບຮ່ວມລະຫວ່າງ ສ. ອາເມຣິກາ ແລະ ພັນທະມິດ (ສ.ເກົາຫຼີ-ຍີ່ປຸ່ນ) ພາຍໃຕ້ຊື່ວ່າ: Freedom Edge ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 24-31 ກໍລະກົດ 2026, ການຊ້ອມຮົບດັ່ງກ່າວ, ສປປ ເກົາຫຼີ ກ່າວວ່າເປັນການຍຸແຍ່ ແລະ ຄຸກຄາມຄວາມໝັ້ນຄົງ ກໍຄືອະທິປະໄຕຂອງ ສປປ ເກົາຫຼີ, ທັງເປັນການສ້າງຄວາມເຄັ່ງຕຶງໃນແຫຼມເກົາຫຼີ ແລະ ເປັນຄວາມພະຍາຍາມສ້າງພັນທະມິດທາງທະຫານແບບນາໂຕ້ ໃນອາຊີ-ປາຊີຟິກ ຢ່າງເປັນຮູບປະທຳ. ນອກຈາກນີ້, ຍັງເນັ້ນຢ້ຳວ່າ ສປປ ເກົາຫຼີ ຈະສືບຕໍ່ເພີ່ມທະວີ ແລະ ພັດທະນາຄວາມສາມາດທາງດ້ານການປ້ອງກັນຊາດ (ລວມທັງກຳລັງອາວຸດນິວເຄຼຍ) ເພື່ອປ້ອງກັນຕົນເອງ ແລະ ຮັກສາຄວາມສະຫງົບໃນພາກພື້ນ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ສ.ອາເມຣິກາ ຊ່ວຍຍີ່ປຸ່ນຮັກສາສະຖຽນລະພາບຂອງຄ່າເງິນເຢນ**: ວັນທີ 04 ສິງຫາ 2026, ສ.ອາເມຣິກາ ໄດ້ກ່າວວ່າ ຈະເຮັດທຸກວິທີທາງ ເພື່ອສະໜັບສະໜູນຍີ່ປຸ່ນ ໃນການຮັກສາສະຖຽນລະພາບຂອງຄ່າເງິນເຢນ. ກ່ອນໜ້ານີ້, ຄ່າເງິນເຢນ ໄດ້ອ່ອນຄ່າລົງເຖິງລະດັບຕ່ຳທີ່ສຸດໃນອັດຕາ 158 ເຢນ ຕໍ່ 01 ໂດລາສະຫະລັດ. ພ້ອມດຽວກັນນີ້, ສ.ອາເມຣິກາ ໄດ້ສະແດງຄວາມຍິນດີທີ່ລັດຖະບານຍີ່ປຸ່ນ ຕ້ອງການນຳໃຊ້ກົນໄກຮອງຮັບສະພາບຄ່ອງຕົວທາງດ້ານການເງິນຂອງທະນາຄານກາງ ສ.ອາເມຣິກາ (Foreign and International Monetary Authorities (FIMA) Repo Facility) ຊຶ່ງເປັນກົນໄກທີ່ເປີດໂອກາດໃຫ້ທະນາຄານກາງ ແລະ ອົງການການເງິນສາກົນ ສາມາດນຳເອົາພັນທະບັດລັດຖະບານ ສ.ອາເມຣິກາ ທີ່ຖືຄອງຢູ່ມາແລກເປັນ ທະນະບັດໂດລາສະຫະລັດ ແບບຊົ່ວຄາວໄດ້. ກົນໄກດັ່ງກ່າວ ຈະຊ່ວຍໃຫ້ທະນາຄານກາງຍີ່ປຸ່ນ ສາມາດກູ້ຢືມເງິນໄດ້ສູງສຸດເຖິງ 60 ຕື້ໂດລາສະຫະລັດ ເພື່ອສະໜັບສະໜູນເງິນເຢນ.

**ສະພາບໂດຍລວມ:** ໃນວັນທີ 12 ສິງຫາ 2026, ສປປ ເກົາຫຼີ ໄດ້ດຳເນີນການທົດລອງຍິງລູກສອນໄຟລົງໃສ່ເຂດທະເລຂອງ ຍີ່ປຸ່ນ ເພື່ອສົ່ງສັນຍານເຕືອນ ແລະ ເປັນການຕອບໂຕ້ ຕໍ່ການຊ້ອມຮົບຮ່ວມ ລະຫວ່າງ ອາເມຣິກາ, ຍີ່ປຸ່ນ ແລະ ສ.ເກົາຫຼີ ທີ່ຈັດຂຶ້ນໃນເດືອນສິງຫາຂອງທຸກໆປີ ເພື່ອກະກຽມຮັບມືກັບຂີດຄວາມສາມາດດ້ານອາວຸດຂອງ ສປປ ເກົາຫຼີ ທີ່ມີການພັດທະນາຢ່າງຕໍ່ເນື່ອງ. ໃນຂະນະດຽວກັນ, ຄະນະລັດຖະມົນຕີໄຕ້ຫວັນ ໄດ້ສະເໜີຕໍ່ສະພາ ເພື່ອພິຈາລະນາອະນຸມັດການເພີ່ມງົບປະມານດ້ານການປ້ອງກັນຊາດ ສຳລັບສົກປີ 2027 ທີ່ມີຍອດລວມສູງເຖິງ 34 ຕື້ໂດລາສະຫະລັດ, ເພີ່ມຂຶ້ນ 16% ເມື່ອທຽບໃສ່ ງົບປະມານຂອງປີ 2026 ທີ່ມີມູນຄ່າ 31 ຕື້ໂດລາສະຫະລັດ. ການສະເໜີເພີ່ມງົບປະມານດັ່ງກ່າວ ແມ່ນນະໂຍບາຍຫຼັກຂອງຝ່າຍໄຕ້ຫວັນ ທີ່ເນັ້ນໜັກໃສ່ການເສີມສ້າງຂີດຄວາມສາມາດດ້ານການທະຫານຂອງຕົນ. ກ່ອນໜ້ານີ້, ໃນເດືອນພຶດສະພາ 2026, ສະພາໄຕ້ຫວັນ ກໍໄດ້ຮັບຮອງງົບປະມານມູນຄ່າ 24 ຕື້ໂດລາສະຫະລັດ ສຳລັບໂຄງການຈັດຊື້ອາວຸດຍຸດໂທປະກອນ ໄລຍະຍາວຮອດປີ 2033. ການເຄື່ອນໄຫວດັ່ງກ່າວ ເກີດຂຶ້ນທ່າມກາງສະພາບການທີ່ໄຕ້ຫວັນ ອ້າງວ່າໄດ້ຮັບແຮງກົດດັນຈາກພາຍນອກ ໂດຍສະເພາະແມ່ນການເຄື່ອນໄຫວກິດຈະກຳທາງການທະຫານຂອງ ສປ ຈີນ ຢູ່ບໍລິເວນອ້ອມຮອບເກາະໄຕ້ຫວັນ.

## 3. ພາກພື້ນເອີຣົບ-ອາເມຣິກາ

**ຄວາມຂັດແຍ່ງລະຫວ່າງ ອູແກຣນ-ຣັດເຊຍ:** ສະພາບການມີທ່າອ່ຽງທະວີຄວາມຮຸນແຮງຂຶ້ນຢ່າງຕໍ່ເນື່ອງ ຜ່ານການໂຈມຕີທາງອາກາດ ແລະ ທາງນ້ຳ. ໂດຍຫຼ້າສຸດ, ອູແກຣນ ໄດ້ນຳໃຊ້ໂດຣນ ແລະ ລູກສອນໄຟ ໂຈມຕີໃສ່ທ່າເຮືອ Novorossiysk ຊຶ່ງເປັນທັງສູນກາງການສົ່ງອອກທັນຍາຫານ ແລະ ຖານທັບເຮືອຂະໜາດໃຫຍ່ຂອງ ຣັດເຊຍ ໃນເຂດທະເລດຳ. ໃນຂະນະດຽວກັນ, ຣັດເຊຍ ກໍໄດ້ຕອບໂຕ້ດ້ວຍການໂຈມຕີໃສ່ພື້ນຖານໂຄງລ່າງທາງທະເລຂອງ ອູແກຣນ ໂດຍສະເພາະແມ່ນ ທ່າເຮືອ Odessa, Ochakov ແລະ Chernomorsk. ເປົ້າໝາຍການໂຈມຕີດັ່ງກ່າວ ລວມມີ: ເຮືອ

ທາງການທະຫານ, ເຮືອຂົນສົ່ງນ້ຳມັນ ແລະ ສິ່ງອຳນວຍຄວາມສະດວກ ທີ່ນຳໃຊ້ເຂົ້າໃນການປ່ຽນຖ່າຍສິນຄ້າທາງການທະຫານ, ພ້ອມທັງໄດ້ບຸກໂຈມຕີທາງບົກເຂົ້າໃນເຂດ Kharkov. ພ້ອມດຽວກັນນີ້, ຣັດເຊຍ ໄດ້ກ່າວວ່າ ການທີ່ອູແກຣນ ໂຈມຕີພື້ນຖານໂຄງລ່າງດ້ານກະສິກຳ ແລະ ທັນຍາຫານຂອງ ຣັດເຊຍ ນັ້ນອາດເຮັດໃຫ້ລາຄາສະບຽງອາຫານໃນຕະຫຼາດໂລກ ສູງຂຶ້ນຢ່າງໄວວາ ແລະ ສ້າງຄວາມສ່ຽງຕໍ່ການຂາດແຄນທັນຍາຫານ ເນື່ອງຈາກຣັດເຊຍ ເປັນໜຶ່ງໃນປະເທດຜູ້ສົ່ງອອກທັນຍາຫານລາຍໃຫຍ່ທີ່ສຸດຂອງໂລກ. ອີກດ້ານໜຶ່ງ, ໃນວັນທີ 07 ສິງຫາ 2026 ທີ່ຜ່ານມາ, ສະພາສູງ ສ.ອາເມຣິກາ ໄດ້ຮັບຮອງເອົາຮ່າງກົດໝາຍວ່າດ້ວຍການຂວ້ຳບາດ ຣັດເຊຍ ແລະ ອີຣານ. ຊຶ່ງຮ່າງກົດໝາຍສະບັບນີ້ ຈະໃຫ້ສິດແກ່ ທ່ານ ໂດນັນ ທຣຳ ສາມາດກຳນົດອັດຕາພາສີສູງເຖິງ 100% ຕໍ່ 05 ປະເທດ ທີ່ນຳເຂົ້ານ້ຳມັນ ແລະ ອາຍແກັສ ຈາກຣັດເຊຍ ຫຼາຍທີ່ສຸດ ຊຶ່ງໃນນັ້ນລວມມີ ສປ ຈີນ ແລະ ອິນເດຍ.

**ຜົນສຳຫຼວດ ຄະແນນນິຍົມ ພັກ Democrats ແລະ ພັກ Republican ໃນດ້ານເສດຖະກິດ:** ອີງຕາມຜົນສຳຫຼວດຂອງ Reuters/Ipsos ໃນລະຫວ່າງວັນທີ 29 ກໍລະກົດ - 03 ສິງຫາ 2026, ພົບວ່າ ປະຊາຊົນອາເມຣິກາ ໃຫ້ຄວາມໄວ້ວາງໃຈ Democrats ຫຼາຍກວ່າ ພັກ Republican ໃນການບໍລິຫານເສດຖະກິດ, ຊຶ່ງຖືເປັນຄັ້ງທຳອິດໃນຮອບເກືອບ 10 ປີ. ພ້ອມດຽວກັນນີ້, ຄະແນນນິຍົມຂອງ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ຫຼຸດລົງຈາກ 37% ໃນເດືອນກໍລະກົດ 2026 ເຫຼືອພຽງ 35%. ຜົນສຳຫຼວດດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ການແກ້ໄຂບັນຫາທາງດ້ານເສດຖະກິດຂອງ ທ່ານ ທຣຳ ລວມທັງລາຄານ້ຳມັນທີ່ເພີ່ມສູງຂຶ້ນຍ້ອນການເຮັດສົງຄາມກັບອີຣານ ອາດສົ່ງຜົນກະທົບຕໍ່ຂອງພັກ Republican ໃນການເລືອກຕັ້ງກາງສະໄໝ ໃນເດືອນພະຈິກ 2026 ທີ່ຈະມາເຖິງນີ້.

**ການເມືອງເປຣູ:** ໃນວັນທີ 28 ກໍລະກົດ 2026, ທ່ານ ນາງ Keiko Fujimori, ອາຍຸ 51 ປີ, ຈາກພັກ Popular Force ໄດ້ເຂົ້າພິທີສາບານຕົນຮັບຕຳແໜ່ງເປັນປະທານາທິບໍດີ ຄົນທີ 64 ຂອງເປຣູ ຢ່າງເປັນທາງການ. ພາຍຫຼັງທີ່ຜູ້ກ່ຽວໄດ້ຮັບໄຊຊະນະການເລືອກຕັ້ງປະທານາທິບໍດີ ໃນວັນທີ 07 ມິຖຸນາ 2026 ຜ່ານມາ. ຊຶ່ງພັກ Popular Force ເປັນພັກການເມືອງຝ່າຍຂວາຈັດ, ດຳເນີນນະໂຍບາຍອະນຸລັກນິຍົມ ຕ້ານກັບລະບອບກອມມູນິດໂດຍກົງ ມີບ່ອນນັ່ງໃນສະພາສູງ 22/60, ສະພາຕ່ຳ 41/130. ພ້ອມນີ້, ລັດຖະບານເປຣູ ຊຸດໃໝ່ ປະກອບມີຮອງປະທານາທິບໍດີ 02 ທ່ານ (ທ່ານ Luis Galarreta ແລະ ທ່ານ Miguel Torres) ແລະ ບັນດາລັດຖະມົນຕີ ອີກຈຳນວນ 19 ທ່ານ. ໃນໂອກາດດັ່ງກ່າວ, ມີຄະນະຜູ້ແທນຕ່າງປະເທດທີ່ຖືກເຊີນເຂົ້າຮ່ວມຈາກ ອາກຊັງຕີນ, ສະເປນ, ໂບລີວີ, ຊີເລ, ເອກວາດໍ, ຣິງດູຣັດ, ປານາມາ, ປາຣາກວາຍ, ອູຣູກວາຍ, ອາຣູບາ ແລະ ຜູ້ຕາງໜ້າ 04 ປະເທດ: ກວາເຕມາລາ, ບຣາຊິນ, ສປ ຈີນ, ອາເມຣິກາ.

## 4.ພາກພື້ນຕາເວັນອອກກາງ

**ສະພາບຄວາມເຄັ່ງຕຶງໃນຕາເວັນອອກກາງ:** ສ.ອາເມຣິກາ ແລະ ອີຣານ ຍັງບໍ່ສາມາດບັນລຸຂໍ້ຕົກລົງຮ່ວມກັນເພື່ອຢຸດຕິສົງຄາມ ແລະ ຟື້ນຟູຂໍ້ຕົກລົງຊົ່ວຄາວ ທີ່ໄດ້ລົງນາມຮ່ວມກັນໃນເດືອນມິຖຸນາ 2026 ທີ່ຜ່ານມາ. ຂະນະດຽວກັນ, ການກຳນົດຂອບເວລາໃນການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ກໍຍັງບໍ່ມີຄວາມຄືບໜ້າໃດໆ. ສຳລັບສະຖານະການໃນຊ່ອງແຄບຮໍມຸດ (Hormuz) ຍັງຄົງຖືກປິດຢູ່ ເຖິງແມ່ນວ່າຈະມີການປຶກສາຫາລືກັນລະຫວ່າງ ໂອມານ ແລະ ອີຣານໃນໄລຍະຜ່ານມາກໍຕາມ. ອີຣານ ໄດ້ຢືນຢັນຢ່າງໜັກແໜ້ນວ່າ ຈະບໍ່ເປີດເສັ້ນທາງແລ່ນເຮືອດັ່ງກ່າວ ຖ້າຫາກ ສ.ອາເມຣິກາ ຍັງບໍ່ຕອບສະໜອງຕໍ່ຂໍ້ຮຽກຮ້ອງຂອງຕົນ ຊຶ່ງລວມມີ ການຍົກເລີກມາດຕະການຂວ້ຳບາດ, ການປ່ອຍຊັບສິນທີ່ຖືກອາຍັດໄວ້ ແລະ ການຊົດເຊີຍຄ່າເສຍຫາຍຈາກການໂຈມຕີ. ໃນຂະນະດຽວກັນ, ທ່ານ ໂດນັນ ທຣຳ ກໍໄດ້ອອກມາຕອບໂຕ້ ໂດຍຮຽກຮ້ອງໃຫ້ອີຣານ ຈ່າຍຄ່າຊົດເຊີຍຕໍ່ກໍລະນີທະຫານອາເມຣິກາ ທີ່ເສຍຊີວິດໃນສົງຄາມເຊັ່ນດຽວກັນ. ທ່າມກາງຄວາມວິຕົກກັງວົນວ່າ ຂໍ້ຂັດແຍ່ງດັ່ງກ່າວອາດຈະແຜ່ລາມໄປທົ່ວພາກພື້ນ, ໃນວັນທີ 07 ສິງຫາ 2026, ອາຣັບບີ ຊາອຸດີດ, ປາກິດສະຖານ ແລະ ຕວັກກີ ໄດ້ລົງນາມໃນຂໍ້ຕົກລົງປ້ອງກັນປະເທດຮ່ວມກັນ ທີ່ ນະຄອນເມັກກາ (Mecca) ປະເທດອາຣັບບີ ຊາອຸດີດ ເພື່ອເສີມສ້າງຂີດຄວາມສາມາດໃນການຮັບມືຕໍ່ການຮຸກຮານຮ່ວມກັນ. ຖະແຫຼງການຮ່ວມໄດ້ລະບຸແຈ້ງວ່າ: ການໃຊ້ກຳລັງອາວຸດໂຈມຕີປະເທດໃດປະເທດໜຶ່ງໃນກຸ່ມ ຈະຖືເປັນການໂຈມຕີຕໍ່ທັງ 03 ປະເທດ.

**ເວເນຊູເອລາ ແລະ ອິດສະຣາແອນ ຟື້ນຟູການພົວພັນການທູດຄືນໃໝ່:** ໃນວັນທີ 11 ສິງຫາ 2026, ເວເນຊູເອລາ ແລະ ອິດສະຣາແອນ ໄດ້ບັນລຸຂໍ້ຕົກລົງໃນການຟື້ນຟູການພົວພັນທາງກົງສຸນຄືນໃໝ່. ເຫດການດັ່ງກ່າວ ຖືເປັນການປ່ຽນແປງທິດທາງດ້ານການທູດຄັ້ງໃຫຍ່ ພາຍຫຼັງທີ່ ເວເນຊູເອລາ ໄດ້ຕັດສາຍພົວພັນທາງການທູດ ກັບ ອິດສະຣາ

ແອນ ມາຕັ້ງແຕ່ປີ 2009 ຍ້ອນກໍລະນີການໂຈມຕີຂອງ ອິດສະຣາແອນ ໃນເຂດກາຊາ. ໃນໄລຍະນັ້ນ, ພາຍໃຕ້ການນໍາພາຂອງ ທ່ານ ນິໂກລາສ ມາດູໂຣ (Nicolas Maduro), ເວເນຊູເອລາ ໄດ້ສະແດງຈຸດຢືນຕໍ່ຕ້ານອິດສະຣາແອນ ພ້ອມທັງຫັນໄປຮ່ວມມືຢ່າງໃກ້ຊິດກັບອີຣານ ທີ່ເປັນສັດຕູຂອງອິດສະຣາແອນ ໃນພາກພື້ນ. ການຟື້ນຟູການພົວພັນໃນຄັ້ງນີ້ ເກີດຂຶ້ນພາຍຫຼັງທີ່ ທ່ານ ນາງ ເດລຊີ ໂຣດຣິເກຊ (Delcy Rodriguez) ຂຶ້ນຮັບຕໍາແໜ່ງເປັນປະທານາທິບໍດີຊົ່ວຄາວຂອງ ເວເນຊູເອລາ ແລະ ໄດ້ມີການປັບປ່ຽນນະໂຍບາຍການຕ່າງປະເທດໃຫ້ມີຄວາມໃກ້ຊິດກັບ ສ.ອາເມຣິກາ ຫຼາຍຂຶ້ນ. ເຫດການນີ້ ຍັງຖືເປັນສັນຍານທາງບວກ ໃນການປັບປຸງການພົວພັນລະຫວ່າງສອງປະເທດ ເຖິງແມ່ນວ່າຈະຍັງບໍ່ທັນກ້າວໄປເຖິງຂັ້ນການຟື້ນຟູສາຍພົວພັນທາງການທູດ ແບບເຕັມຮູບແບບກໍຕາມ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

### 1. ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ເຈີນ ແທງ ເໝີ້ນ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ສສ ຫວຽດນາມ





ວັນທີ 09 ສິງຫາ 2026, ທີ່ ຫ້ອງວ່າການສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ເຈີນ ແທງ ເໝີ້ນ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ສສ ຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ພັກ, ລັດ ສສ ຫວຽດນາມ ໃນໂອກາດເດີນທາງມາວາງພວງມາລາ ແລະ ໄວ້ອາໄລ ເຖິງດວງວິນຍານຂອງ ສະຫາຍ ໄຊສົມພອນ ພົມວິຫານ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ສປປ ລາວ ທີ່ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 08 ສິງຫາ 2026 ຜ່ານມາ.

ສະຫາຍ ທອງລຸນ ສີສຸລິດ ໄດ້ຕາງໜ້າໃຫ້ ຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແຫ່ງ ສປປ ລາວ, ສູນກາງແນວລາວສ້າງຊາດ ແລະ ຄອບຄົວຂອງ ສະຫາຍ ໄຊສົມພອນ ພົມວິຫານ ສະແດງຄວາມຊາບຊຶ້ງ ແລະ ຂອບໃຈ ຕໍ່ ສະຫາຍ ເຈີນ ແທງ ເໝີ້ນ ທີ່ໄດ້ນຳພາ ຄະນະຜູ້ແທນຂັ້ນສູງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ເດີນທາງມາຮ່ວມ ພິທີວາງພວງມາລາ ແລະ ໄວ້ອາໄລເຖິງດວງວິນຍານຂອງ ສະຫາຍ ໄຊສົມພອນ ພົມວິຫານ, ເຊິ່ງເປັນການບົ່ງບອກຄວາມເສົ້າໂສກເສຍດາຍ ຂອງ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ແລະ ທັງເປັນການສະແດງໃຫ້ເຫັນ ນ້ຳໃຈແຫ່ງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ອັນສະເໝີຕົ້ນສະເໝີປາຍ ລະຫວ່າງ ສອງພັກ, ສອງລັດ ລາວ-ຫວຽດນາມ, ເຊິ່ງຍາມໃດການນຳ ສອງພັກ, ສອງລັດ ກໍໄດ້ຢັ້ງຢືນວ່າ ຄວາມສາມັກຄີ, ການຮ່ວມມື, ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂອງສອງປະເທດ ລາວ-ຫວຽດນາມ ນັ້ນແມ່ນເປັນກົດເກນພາວະວິໄສ, ເປັນປັດໃຈທີ່ມີຄວາມໝາຍຕັດສິນໄຊຊະນະພາລະກິດປະຕິວັດຂອງ ແຕ່ລະພັກ, ແຕ່ລະປະເທດ, ເຖິງວ່າສະພາບການຂອງໂລກ ຈະຜັນແປໄປຢ່າງສັບສົນກໍ່ຕາມ ແຕ່ສອງປະເທດຍັງຕັດສິນໃຈຮ່ວມກັນປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນພິເສດ, ບໍລິສຸດພຸດຜ່ອງ, ໃສແຈ້ງ ແລະ ຫາຍາກ ໃຫ້ນັບມື້ພັດທະນາເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ. ສະຫາຍ ທອງລຸນ ສີສຸລິດ ຕີລາຄາວ່າ ສະຫາຍ ໄຊສົມພອນ ພົມວິຫານ ເປັນໜຶ່ງໃນບັນດາສະຫາຍການນຳຫຼັກແຫຼ່ງຂອງ ພັກປະຊາຊົນປະຕິວັດລາວ ທີ່ມີຄວາມຮູ້ຄວາມສາມາດ ແລະ ແກນນຳຂອງສູນກາງພັກ ໃນການນຳພາ-ຊີ້ນຳ ການປະຕິວັດ ໃນເມື່ອກ່ອນ ແລະ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດກໍຄື ເປັນຜູ້ນຳໜ້າໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ຮອບດ້ານ ຢ່າງມີຫຼັກການຂອງພັກ; ເປັນນັກປະຕິວັດທີ່ມີນ້ຳໃຈຮັກຊາດ ອັນສູງສົ່ງ ແລະ ເປັນຜູ້ນຳທີ່ດີເດັ່ນຂອງພັກ, ຂອງຊາດ, ຕະຫຼອດຊີວິດຂອງສະຫາຍ ໄດ້ອຸທິດສະຕິປັນຍາ ແລະ ເຫື່ອແຮງເພື່ອພາລະກິດປະຕິວັດ, ເພື່ອການພັດທະນາປະເທດຊາດ ແລະ ຄວາມຢູ່ດີກິນດີໃຫ້ແກ່ປະຊາຊົນລາວບັນດາເຜົ່າ. ໃນຍາມຍັງມີຊີວິດ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເອົາໃຈໃສ່ເປັນພິເສດ ໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ລາວ-ຫວຽດນາມ, ຖືເປັນບູລິມະສິດອັນດັບຕົ້ນໃນແນວທາງການຕ່າງປະເທດ, ມີຄວາມຮັກແພງສະໜິດສະໜົມກັບຜູ້ນຳ ພັກ, ລັດ ຫວຽດນາມ ແລະ ຢືນຢັນວ່າ ໃນທ່າມກາງຄວາມໂສກເສົ້າເສຍໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງນີ້ ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ, ພະນັກງານ, ສະມາຊິກພັກ ແລະ ທົ່ວປວງຊົນລາວທັງຊາດ ຈະຫັນຄວາມເສົ້າສະຫຼົດໃຈ ແລະ ຄວາມອາໄລຮັກຕໍ່ ສະຫາຍ ໄຊສົມພອນ ພົມວິຫານ ໃຫ້

ກາຍເປັນການກະທຳຕົວຈິງ, ສາມັກຄີເປັນປຶກແຜ່ນແໜ້ນໜາ ອ້ອມຂ້າງຄະນະບໍລິຫານງານສູນກາງພັກ ເສີມຂະຫຍາຍມູນເຊື້ອອັນສະຫງ່າອົງອາດຂອງຊາດ ແລະ ຂອງພັກ, ເດັດດ່ຽວໜຽວແໜ້ນ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກສູ່ລວງເລິກ, ສືບຕໍ່ບູລະນະ ລະບອບປະຊາທິປະໄຕ ປະຊາຊົນ ກ້າວຂຶ້ນຕາມຈຸດໝາຍສັງຄົມນິຍົມ.

ສະຫາຍ ເຈີນ ແທງ ເໜີ້ນ ໄດ້ຕາງໜ້າ ສູນກາງພັກ, ປະທານປະເທດ, ລັດຖະບານ, ສະພາແຫ່ງຊາດ ແລະ ແນວໂຮມປະເທດຊາດຫວຽດນາມ ສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ການເຖິງແກ່ມໍລະນະກຳຂອງ ສະຫາຍ ໄຊສົມພອນ ພົມວິຫານ, ພ້ອມທັງໄດ້ຕີລາຄາວ່າ ສະຫາຍ ໄຊສົມພອນ ພົມວິຫານ ແມ່ນການນຳຫຼັກແຫຼ່ງຂອງສູນກາງພັກປະຊາຊົນປະຕິວັດລາວ, ເປັນຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ, ຕະຫຼອດຊີວິດໄດ້ເສຍສະຫຼະສູ້ຊົນ ເພື່ອຄວາມເປັນເອກະລາດຂອງຊາດ, ສິດເສລີພາບ, ຄວາມຜາສຸກຂອງປະຊາຊົນ ແລະ ການພັດທະນາຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ. ການຈາກໄປຂອງ ສະຫາຍ ໄຊສົມພອນ ພົມວິຫານ ບໍ່ພຽງແຕ່ເປັນການສູນເສຍອັນໃຫຍ່ຫຼວງ ສຳລັບ ພັກ, ລັດ, ປະຊາຊົນລາວ ແລະ ຄອບຄົວຂອງສະຫາຍ, ແຕ່ຫາກຍັງເປັນ ການສູນເສຍຜູ້ເປັນເພື່ອນມິດທີ່ຍິ່ງໃຫຍ່, ສະຫາຍອ້າຍນ້ອງທີ່ສະໜິດສະໜົມທີ່ສຸດ ຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມ. ສະຫາຍ ຍາມໃດກໍສະໜັບສະໜູນຕໍ່ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດຂອງປະຊາຊົນຫວຽດນາມ ແລະ ໄດ້ມີການປະກອບສ່ວນສຳຄັນຫຼວງຫຼາຍໃນການສ້າງສາ, ຮັດແໜ້ນ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ; ຕີລາຄາສູງຕໍ່ບັນດາການອຸທິດອັນໃຫຍ່ຫຼວງຂອງ ສະຫາຍ ໄຊສົມພອນ ພົມວິຫານ ໃນພາລະກິດການປະຕິວັດ ໃນເມື່ອກ່ອນ ກໍຄື ໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ, ສ້າງສາ ແລະ ພັດທະນາຊາດຂອງ ສປປ ລາວ ໃນປັດຈຸບັນ. ພັກ, ລັດ ແລະ ປະຊາຊົນຫວຽດນາມ ຂໍແບ່ງເບົາຄວາມເສົ້າສະຫຼົດໃຈອັນສຸດຊຶ້ງ ແລະ ແບ່ງປັນຄວາມທຸກໂສກທີ່ສຸດ ມາຍັງ ພັກ, ລັດ, ຄະນະກຳມະການສູນກາງແນວລາວສ້າງຊາດ, ປະຊາຊົນລາວ ແລະ ຄອບຄົວຂອງ ສະຫາຍ ໄຊສົມພອນ ພົມວິຫານ ແລະ ເຊື່ອໝັ້ນວ່າ ພັກ, ລັດ, ປະຊາຊົນລາວ ອ້າຍນ້ອງ ແລະ ຄອບຄົວຂອງ ສະຫາຍ ໄຊສົມພອນ ພົມວິຫານ ຈະຜ່ານຜ່າຄວາມທຸກໂສກເສຍດາຍອັນໃຫຍ່ຫຼວງນີ້ ໂດຍໄວ ແລະ ສືບຕໍ່ພາລະກິດສ້າງສາປະເທດລາວ ໃຫ້ນັບມື້ພັດທະນາຈະເລີນຮຸ່ງເຮືອງ.

## 2. ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສົ່ງໂທລະເລກເສົ້າສະຫຼົດໃຈມາຍັງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ

ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ໄດ້ສົ່ງໂທລະເລກເສົ້າສະຫຼົດໃຈມາຍັງ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ສູນກາງແນວລາວສ້າງຊາດ ແຫ່ງ ສປປ ລາວ ຕໍ່ການມໍລະນະກຳຂອງ ສະຫາຍ ໄຊສົມພອນ ພົມວິຫານ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ, ເຊິ່ງມີເນື້ອໃນດັ່ງນີ້:

ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ປະຊາຊົນຫວຽດນາມ ຂໍສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ເມື່ອໄດ້ຮັບຂ່າວ ສະຫາຍ ໄຊສົມພອນ ພົມວິຫານ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 08 ສິງຫາ 2026.

ສະຫາຍ ໄຊສົມພອນ ພົມວິຫານ ເປັນຜູ້ນຳທີ່ໂດດເດັ່ນຂອງ ພັກ, ລັດ ແລະ ປະຊາຊົນລາວ, ເປັນນັກກອມມູນິດທີ່ຈົງຮັກພັກດີ ແລະ ໄດ້ອຸທິດຊີວິດທັງໝົດຂອງຕົນໃຫ້ແກ່ພາລະກິດການປະຕິວັດຂອງພັກປະຊາຊົນປະຕິວັດລາວ, ໃຫ້ພາລະກິດການປົກປັກຮັກສາ, ສ້າງສາ ແລະ ການພັດທະນາປະເທດລາວທີ່ມີສັນຕິພາບ, ເອກະລາດ, ເອກະພາບ ແລະ ຈະເລີນຮຸ່ງເຮືອງ. ໃນຖານະຕຳແໜ່ງ ທີ່ເປັນປະທານສະພາແຫ່ງຊາດ ແລະ ໃນບົດບາດສຳຄັນອື່ນໆຈຳນວນໜຶ່ງຂອງພັກ ແລະ ລັດ, ສະຫາຍ ໄດ້ມີການປະກອບສ່ວນອັນສຳຄັນເຂົ້າໃນການປັບປຸງລະບຽບກົດໝາຍໃຫ້ສົມບູນແບບ, ເສີມຂະຫຍາຍປະສິດທິພາບ ແລະ ກົດໝາຍໃຫ້ສົມບູນແບບ, ເສີມຂະຫຍາຍປະສິດທິພາບ ແລະ ປະສິດທິຜົນຂອງສະພາແຫ່ງຊາດລາວ, ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ, ເສີມສ້າງຄວາມສາມັກຄີພາຍໃນຊາດ ແລະ ຍົກສູງຖານະຂອງລາວໃນເວທີສາກົນ.

ສະຫາຍ ໄຊສົມພອນ ພົມວິຫານ ເປັນສະຫາຍ ແລະ ເພື່ອນທີ່ຍິ່ງໃຫຍ່ ຜູ້ສະໜິດສະໜົມຂອງ ພັກ, ລັດ ແລະ ປະຊາຊົນຫວຽດນາມ, ຍາມໃດກໍມີຈິດໃຈຄວາມຮັກແພງອັນເລິກເຊິ່ງ ແລະ ຄວາມເປັນຫ່ວງເປັນໄຍເປັນພິເສດຕໍ່ການປົກປັກຮັກສາ, ເພີ່ມພູນຄູນສ້າງ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ ແລະ ລາວ.

ການຈາກໄປຂອງສະຫາຍ ໄຊສົມພອນ ພົມວິຫານ ເປັນການສູນເສຍອັນໃຫຍ່ຫຼວງຕໍ່ ພັກ, ລັດ ແລະ ປະຊາຊົນລາວອ້າຍນ້ອງ ແລະ ໃນເວລາດຽວກັນ, ພັກ, ລັດ ແລະ ປະຊາຊົນຫວຽດນາມ ກໍໄດ້ສູນເສຍເພື່ອນທີ່ຍິ່ງໃຫຍ່, ຜູ້ເປັນສະຫາຍທີ່ເຄົາລົບຮັກ ແລະ ສະໜິດສະໜົມ.

ພວກຂ້າພະເຈົ້າ ເຊື່ອໝັ້ນວ່າ ພັກ, ລັດ ແລະ ປະຊາຊົນລາວອ້າຍນ້ອງ ແລະ ຄອບຄົວຂອງ ສະຫາຍ ໄຊສົມພອນ ພົມວິຫານ ຈະຜ່ານຜ່າຄວາມທຸກໂສກເສຍດາຍ, ການສູນເສຍອັນໃຫຍ່ຫຼວງນີ້ ໂດຍໄວ ແລະ ສືບຕໍ່ພາລະກິດສ້າງປະເທດລາວ ໃຫ້ນັບມື້ພັດທະນາ ແລະ ຈະເລີນຮຸ່ງເຮືອງ.

### 3. ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈິ່ນ ເກິມ ຕູ໋, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ





ວັນທີ 12 ສິງຫາ 2026, ທີ່ ຫ້ອງວ່າການສູນກາງພັກ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ເຈິ່ນ ເກິມ ຕູ໋, ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ພັກ, ລັດ ສສ ຫວຽດນາມ ໃນໂອກາດເດີນທາງມາຮ່ວມພິທີໄວ້ອາໄລ ແລະ ພິທີຊາປະນະກິດສົບຂອງ ສະຫາຍ ໄຊສົມພອນ ພົມວິຫານ, ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ.

ສະຫາຍ ທອງລຸນ ສີສຸລິດ ໄດ້ຕາງໜ້າໃຫ້ ພັກ, ລັດ ສປປ ລາວ ແລະ ຄອບຄົວ ພົມວິຫານ ສະແດງຄວາມຊາບຊຶ້ງ ແລະ ຂອບໃຈຕໍ່ ສະຫາຍ ເຈິ່ນ ເກິມ ຕູ໋ ທີ່ໄດ້ນຳພາ ຄະນະຜູ້ແທນຂັ້ນສູງ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ເດີນທາງມາຮ່ວມພິທີໄວ້ອາໄລ ແລະ ພິທີຊາປະນະກິດສົບຂອງ ສະຫາຍ ໄຊສົມພອນ ພົມວິຫານ, ພ້ອມທັງໄດ້ສະແດງຄວາມຂອບໃຈ ທີ່ ພັກ, ລັດ ສສ ຫວຽດນາມ ໄດ້ສົ່ງໂທລະເລກສະແດງຄວາມເສົ້າສະຫຼົດໃຈມາຍັງ ພັກ, ລັດ ສປປ ລາວ ແລະ ຄອບຄົວ ພົມວິຫານ ແລະ ຍັງໄດ້ມີການໄວ້ທຸກລະດັບຊາດ ເປັນເວລາ 2 ວັນ (10-11/8/2026) ຢູ່ ສສ ຫວຽດນາມ, ພ້ອມທັງ ບັນດາການນຳຂັ້ນສູງ ພັກ, ລັດ ແລະ ຕາງໜ້າອົງການຈັດຕັ້ງຕ່າງໆຂອງຫວຽດນາມ ຍັງໄດ້ເຂົ້າໄປໄວ້ອາໄລ ຢູ່ ສະຖານທູດ ແລະ ສະຖານກົງສຸນຂອງ ສປປ ລາວ ປະຈຳ ຫວຽດນາມ, ເຊິ່ງສິ່ງດັ່ງກ່າວ ເປັນການບົ່ງບອກເຖິງຄວາມເສົ້າໂສກເສຍດາຍ ແລະ ໃຫ້ກຳລັງໃຈອັນໃຫຍ່ຫຼວງຕໍ່ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ກໍຄືຄອບຄົວ ພົມວິຫານ ໃນການສືບຕໍ່ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປປ ລາວ ໃຫ້ປະສົບຜົນສຳເລັດ, ທັງເປັນການສະແດງອອກຢ່າງມີຊີວິດຊີວາເຖິງມູນເຊື້ອມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ທີ່ແຂງແກ່ນແໜ້ນໜາຕະຫຼອດໄປ. ສະຫາຍ ທອງລຸນ ສີສຸລິດ ໄດ້ຕີລາຄາວ່າ ໃນຍາມຍັງມີຊີວິດ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ເອົາໃຈໃສ່ເປັນພິເສດ ໃນການ

ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່ ລາວ-ຫວຽດນາມ, ຖືເປັນບູລິມະສິດອັນດັບຕົ້ນ ໃນແນວທາງການຕ່າງປະເທດ, ມີຄວາມຮັກແພງສະໜິດສະໜົມກັບຜູ້ນຳ ພັກ, ລັດ ຫວຽດນາມ ແລະ ສະຫາຍ ໄຊສົມພອນ ພົມວິຫານ ເປັນໜຶ່ງໃນບັນດາສະຫາຍການນຳຫຼັກແຫຼ່ງຂອງ ພັກປະຊາຊົນປະຕິວັດລາວ ທີ່ມີຄວາມຮູ້ຄວາມສາມາດ ແລະ ເປັນການນຳໜຶ່ງທີ່ເປັນເສົາຄ້ຳທີ່ເຮັດໃຫ້ການປະຕິບັດໜ້າທີ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກນັ້ນ ກ້າວໄປສູ່ຜົນສຳເລັດ, ເຊິ່ງຕະຫຼອດຊີວິດຂອງສະຫາຍ ໄດ້ອຸທິດສະຕິປັນຍາ ແລະ ເຫື່ອແຮງເພື່ອພາລະກິດປະຕິວັດ, ເພື່ອການພັດທະນາປະເທດຊາດ ແລະ ຄວາມຢູ່ດີກິນດີໃຫ້ແກ່ປະຊາຊົນລາວບັນດາເຜົ່າ. ໃນທ່າມກາງຄວາມໂສກເສົ້າເສຍໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງນີ້ ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ, ພະນັກງານ, ສະມາຊິກພັກ ແລະ ທົ່ວປວງຊົນລາວທັງຊາດຈະຫັນຄວາມເສົ້າສະຫຼົດໃຈ ແລະ ຄວາມອາໄລຮັກຕໍ່ ສະຫາຍ ໄຊສົມພອນ ພົມວິຫານ ມາເປັນກຳລັງແຮງຕໍ່ການປະບັດໜ້າທີ່ຂອງ ພັກ, ລັດ ສປປ ລາວ ໃນຕໍ່ໜ້າ, ໃຫ້ກາຍເປັນການກະທຳຕົວຈິງ, ມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາອ້ອມຂ້າງຄະນະບໍລິຫານງານສູນກາງພັກ ເສີມຂະຫຍາຍມູນເຊື້ອອັນສະຫງ່າອົງອາດຂອງຊາດ ແລະ ຂອງພັກ, ເດັດດ່ຽວໜຽວແໜ້ນ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ເຂົ້າສູ່ລວງເລິກ ແລະ ໄດ້ຮັບຜົນສຳເລັດຢ່າງມີໄຊ.

ສະຫາຍ ເຈີ່ນ ເກິມ ຕູ໊ ໄດ້ຕາງໜ້າ ພັກ, ລັດ ແລະ ປະຊາຊົນຫວຽດນາມ ສະແດງຄວາມເສົ້າສະຫຼົດໃຈ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ການເຖິງແກ່ມໍລະນະກຳຂອງ ສະຫາຍ ໄຊສົມພອນ ພົມວິຫານ, ພ້ອມທັງໄດ້ຕີລາຄາວ່າ ສະຫາຍ ໄຊສົມພອນ ພົມວິຫານ ແມ່ນການນຳຫຼັກແຫຼ່ງຂອງສູນກາງພັກປະຊາຊົນປະຕິວັດລາວ, ເປັນຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ, ຕະຫຼອດຊີວິດໄດ້ເສຍສະຫຼະສູ້ຊົນ ເພື່ອຄວາມເປັນເອກະລາດຂອງຊາດ, ສິດເສລີພາບ, ຄວາມຜາສຸກຂອງປະຊາຊົນ ແລະ ການພັດທະນາຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ. ການຈາກໄປຂອງ ສະຫາຍ ໄຊສົມພອນ ພົມວິຫານ ບໍ່ພຽງແຕ່ເປັນການສູນເສຍອັນໃຫຍ່ຫຼວງຂອງ ພັກ, ລັດ, ປະຊາຊົນລາວ ແລະ ຄອບຄົວ ພົມວິຫານ, ແຕ່ຫາກຍັງເປັນ ການສູນເສຍ ຜູ້ເປັນສະຫາຍ ແລະ ເປັນເພື່ອນມິດສະໜິດສະໜົມຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ. ຕີລາຄາສູງຕໍ່ບັນດາການອຸທິດອັນໃຫຍ່ຫຼວງຂອງ ສະຫາຍ ໄຊສົມພອນ ພົມວິຫານ ໃນພາລະກິດການປະຕິວັດ ໃນເມື່ອກ່ອນ ກໍຄື ໃນພາລະກິດປ່ຽນແປງໃໝ່, ປົກປັກຮັກສາ, ສ້າງສາ ແລະ ພັດທະນາຊາດຂອງ ສປປ ລາວ ໃນປັດຈຸບັນ, ໂດຍສະເພາະສະຫາຍ ຍາມໃດກໍສະໜັບສະໜູນຕໍ່ ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດ ຂອງປະຊາຊົນຫວຽດນາມ ແລະ ໄດ້ມີການປະກອບສ່ວນສຳຄັນຫຼວງຫຼາຍໃນການສ້າງສາ, ຮັດແໜ້ນ ແລະ ພັດທະນາສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ, ເຊິ່ງ ພັກ, ລັດ ແລະ ປະຊາຊົນຫວຽດນາມ ຂໍແບ່ງເບົາຄວາມໂສກເສົ້າເສຍດາຍອັນສຸດຊຶ້ງທີ່ສຸດ ມາຍັງ ພັກ, ລັດ, ຄະນະກຳມະການສູນກາງແນວລາວສ້າງຊາດ, ປະຊາຊົນລາວ ແລະ ຄອບຄົວ ພົມວິຫານ ແລະ ເຊື່ອໝັ້ນວ່າ ພັກ, ລັດ, ປະຊາຊົນລາວ ອ້າຍນ້ອງ ແລະ ຄອບຄົວ ພົມວິຫານ ຈະຜ່ານຜ່າຄວາມທຸກໂສກເສຍດາຍອັນໃຫຍ່ຫຼວງນີ້ ໂດຍໄວ ແລະ ສືບຕໍ່ພາລະກິດສ້າງສາປະເທດລາວ ໃຫ້ນັບມື້ພັດທະນາຈະເລີນຮຸ່ງເຮືອງ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

**1. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຢ້ຽມຂໍ່ານັບ ເລຂາທິໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ. ກູບາ**





ໃນນາມຜູ້ຕາງໜ້າພິເສດ ຂອງສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນໍາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກໍາມະກອນ, ແລະ ກອງປະຊຸມສໍາມະນາສາກົນ ຢູ່ ສ.ກູບາ ແຕ່ວັນທີ 04-12 ສິງຫາ 2026.

ວັນທີ 08 ສິງຫາ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ມີແກນ ດີອັດຊ໌ ກາແນນ (Miguel Díaz Canel), ເລຂາທິໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ.ກູບາ. ໃນການພົບປະ, ສະຫາຍ ເລຂາທິການທີໜຶ່ງ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ມາຍັງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ຕີລາຄາສູງຕໍ່ການຢ້ຽມຢາມ ຂອງຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ໃນຊ່ວງໄລຍະປັດຈຸບັນ ທີ່ ກູບາ ພົບຄວາມຫຍຸ້ງຍາກ ຖືເປັນການໃຫ້ກໍາລັງໃຈ ແລະ ສະໜັບສະໜູນ ທັງເປັນການປະກອບສ່ວນສໍາຄັນໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນ ແລະ ການຮ່ວມມື ອັນເປັນມູນເຊື້ອຖານສະຫາຍອ້າຍນ້ອງ ລາວ-ກູບາ. ພ້ອມນັ້ນ, ໄດ້ແຈ້ງຫຍໍ້ສະພາບຂອງ ສ.ກູບາ ໃຫ້ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ຊາບ. ໃນໂອກາດດັ່ງກ່າວ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ນໍາເອົາຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ສະໜິດສະໜົມ ຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄປຍັງ ສະຫາຍ ມີແກນ ດີອັດຊ໌ ກາແນນ ພ້ອມທັງ ແຈ້ງຜົນກອງປະຊຸມໃຫຍ່ຜູ້ແທນ ທົ່ວປະເທດ ຄັ້ງທີ XII ຂອງ ສູນກາງພັກປະຊາຊົນປະຕິວັດລາວ, ມອບໂທລະເລກອວຍພອນວັນເກີດ ສະຫາຍ ຟີແດນ ກາດສະໂຕຣ ຣູດຊ໌ ຄົບຮອບ 100 ປີ ຂອງຄະນະບໍລິຫານງານພັກປະຊາຊົນປະຕິວັດລາວ ໃຫ້ ສະຫາຍເລຂາທິໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ ແລະ ໄດ້ແຈ້ງສະພາບພົ້ນເດັ່ນ ຂອງ ສປປ ລາວ ໃຫ້ ພັກກອມມູນິດກູບາ ຊາບ.

ໃນການພົບປະດັ່ງກ່າວ, ສອງຝ່າຍ ໄດ້ຕີລາຄາສູງ ແລະ ປິຕິຍິນດີ ທີ່ສາຍພົວພັນ ແລະ ການຮ່ວມມື ທີ່ມີມູນເຊື້ອອັນດີງາມ ລະຫວ່າງ ລາວ ແລະ ກູບາ ສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງ ເຮັດໃຫ້ການ ພົວພັນທາງດ້ານການເມືອງມີຄວາມໜັກແໜ້ນ, ມີຄວາມເຂົ້າອົກເຂົ້າໃຈກັນດີ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ທັງໃນເວທີພາກພື້ນ ແລະ ສາກົນ; ການພົວພັນຮ່ວມມື ຂອງບັນດາຂະແໜງການ ຂອງສອງປະເທດ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ແລະ ມີໝາກຜົນ ນໍາເອົາຜົນປະໂຫຍດ ມາສູ່ປະຊາຊົນສອງຊາດ ຢ່າງແທ້ຈິງ.

## 2. ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ເຂົ້າຮ່ວມກອງປະຊຸມສາກົນ ທີ່ ສ. ກູບາ






ຄະນະຜູ້ແທນພັກປະຊາຊົນປະຕິວັດລາວ ນໍາໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກໍາມະການສູນກາງພັກ, ຫົວ ໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກໍາມະກອນ ຄັ້ງທີ 24 (The 24th International Meeting of Communist and Workers' Parties) ແລະ ກອງປະຊຸມສໍາມະນາສາກົນ ຄັ້ງທີ I "ຟີແດນ: ມູນເຊື້ອ ແລະ ອະນາຄົດ" (The 1st International Colloquium "Fidel: Legacy and Future") ແຕ່ວັນທີ 07-12 ສິງຫາ 2026 ທີ່ ນະຄອນຫຼວງລາຮາວານ, ສ. ກູບາ ໂດຍມີ ບັນດາພັກການເມືອງໃນທົ່ວໂລກ ເຂົ້າຮ່ວມຫຼາຍກວ່າ 48 ພັກການເມືອງ.

ສອງກອງປະຊຸມດັ່ງກ່າວ ຈັດຂຶ້ນທ່າມກາງບັນຍາກາດທີ່ມີຄວາມໝາຍ, ຄວາມສໍາຄັນ ກໍຄືການສະເຫຼີມສະຫຼອງ ວັນເກີດ ສະຫາຍ ຟີແດນ ກາສໂຕຣ ຣຸສ ຄົບຮອບ 100 ປີ, ຊຶ່ງ ສະຫາຍ ຟີແດນ ເປັນນັກປະຕິວັດ, ຜູ້ນໍາທີ່ຍິ່ງໃຫຍ່ ຂອງ ກູບາ, ໄດ້ນໍາພາປະຊາຊົນກູບາ ເຮັດການປະຕິວັດ ຍາດໄດ້ໄຊຊະນະ ໃນປີ 1959 ແລະ ນໍາພາປະເທດຊາດ ໄປ ຕາມແນວທາງສັງຄົມນິຍົມ ນັບແຕ່ນັ້ນມາ. ໃນກອງປະຊຸມສໍາມະນາສາກົນ, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງ ຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ພັກກອມມູນິດກູບາ ທີ່ໄດ້ຈັດກອງປະຊຸມທີ່ມີຄວາມໝາຍ, ຄວາມສໍາຄັນໃນຄັ້ງນີ້ ເຖິງວ່າສະພາບພາຍໃນມີຄວາມຫຍຸ້ງຍາກຫຼາຍດ້ານ, ພ້ອມທັງປະກອບຄໍາເຫັນ ໂດຍສະແດງຄວາມເຫັນອົກເຫັນໃຈຕໍ່ກູ ບາ ພາຍໃຕ້ສະພາບການທີ່ຫຍຸ້ງຍາກ ແລະ ສະແດງຄວາມຊົມເຊີຍຕໍ່ປະຊາຊົນກູບາ ໃນຄວາມເດັດດ່ຽວ ຍຶດໝັ້ນ ເສັ້ນທາງການພັດທະນາຂອງຕົນ ທັງສະແດງຄວາມເຊື່ອໝັ້ນວ່າມູນເຊື້ອການຕໍ່ສູ້ອັນບໍ່ຍອມຈໍານົນ ບວກກັບການສະ ໜັບສະໜູນ, ຄວາມສາມັກຄີຂອງບັນດາພັກກອມມູນິດ, ກໍາມະກອນ ແລະ ປະຊາຊາດທີ່ຮັກຫອມສັນຕິພາບ ພັກ-ລັດຖະບານ ແລະ ປະຊາຊົນກູບາ ຈະສາມາດຜ່ານຜ່າທຸກອຸປະສັກ ແລະ ສິ່ງທ້າທາຍຕ່າງໆໃນການປົກປ້ອງ ແລະ ເສີມ ຂະຫຍາຍໝາກຜົນຂອງການປະຕິວັດ, ຍາດເອົາຜົນສໍາເລັດໃໝ່ ໃນການສ້າງສາພັດທະນາປະເທດຊາດ.

ໃນກອງປະຊຸມສາກົນ ຂອງບັນດາພັກກອມມູນິດ ແລະ ກໍາມະກອນ ຄັ້ງທີ 24, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ ຕີລາຄາຕໍ່ສະພາບການຂອງພາກພື້ນ ແລະ ສາກົນ ທີ່ຜັນປ່ຽນໄປຢ່າງສະຫຼັບສັບຊ້ອນ, ໂລກພວມປະເຊີນໜ້າກັບວິກິດ ການຫຼາຍດ້ານ ແລະ ນັບມື້ນັບຮຸນແຮງຂຶ້ນ, ຊຶ່ງໄດ້ສົ່ງຜົນກະທົບຕໍ່ສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງ ແລະ ການພັດທະນາຂອງບັນດາປະເທດ. ສະຫາຍ ໄດ້ຕີລາຄາສູງຕໍ່ໝາກຜົນຂອງຂະບວນການກອມມູນິດ ແລະ ກໍາມະກອນ ສາກົນ ທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງຢືນຢັນວ່າ ພັກປະຊາຊົນປະຕິວັດລາວ ຈະສືບຕໍ່ປະສານສົມທົບຢ່າງຕັ້ງ ໜ້າກັບບັນດາພັກກອມມູນິດ, ກໍາມະກອນ ແລະ ຂະບວນການທີ່ກ້າວໜ້າໃນທົ່ວໂລກ, ເຊື່ອໝັ້ນວ່າໄຊຊະນະຂອງ ພາລະກິດສ້າງສາສັງຄົມນິຍົມ ບໍ່ສາມາດແຍກອອກຈາກຄວາມສາມັກຄີ ແລະ ການສະໜັບສະໜູນເຊິ່ງກັນ ແລະ ກັນ ລະຫວ່າງ ບັນດາພັກອ້າຍນ້ອງໄດ້; ພັກ ປປ ລາວ ຍິນດີທີ່ຈະສືບຕໍ່ເພີ່ມທະວີການຮ່ວມມືກັບບັນດາພັກກອມມູນິດ ແລະ ກໍາມະກອນສາກົນ ໂດຍສະເພາະການເພີ່ມທະວີການແລກປ່ຽນບົດຮຽນທາງດ້ານທິດສະດີ ແລະ ພຶດຕິກໍາ ໃນການ ສ້າງສາສັງຄົມນິຍົມ ໃຫ້ສອດຄ່ອງກັບຈຸດພິເສດຂອງແຕ່ລະປະເທດ, ຮ່ວມກັນຕໍ່ສູ້ຕ້ານລັດທິຈັກກະພັດ, ການກົດຂີ່ຂູດ ຮີດ ແລະ ການແຊກແຊງວຽກງານພາຍໃນຈາກກໍາລັງປໍລະປັກ ແລະ ສະໜັບສະໜູນ ທຸກຄວາມພະຍາຍາມເພື່ອ ສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າຂອງສັງຄົມໃນທົ່ວໂລກ.

**3. ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນ ເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ໃນໂອກາດວັນໄຊຊະນະການປະຕິວັດເດືອນສິງຫາ ແລະ ວັນສະຖາປະນາ ສສ ຫວຽດນາມ ຄົບຮອບ 81 ປີ**





ວັນທີ 27 ສິງຫາ 2026, ຄະນະພັກ-ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນປະຕິວັດ ລາວ ໄດ້ເຂົ້າອວຍພອນ ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດ, ພະນັກງານສະຖານທູດ ສສ ຫວຽດນາມ ແລະ ຫ້ອງການຜູ້ຕາງໜ້າ ສສ ຫວຽດນາມ ປະຈຳ ສປປ ລາວ ໃນໂອກາດວັນໄຊຊະນະການປະຕິວັດເດືອນສິງຫາ (19/8/1945–19/8/2026) ແລະ ວັນສະຖາປະນາ ສສ ຫວຽດນາມ (2/9/1945–2/9/2026) ຄົບຮອບ 81 ປີ.

ໃນໂອກາດນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ສະຫາຍ ຫງວຽນ ມິງ ເຕິມ ພ້ອມດ້ວຍພະນັກງານສະຖານທູດ ສສ ຫວຽດນາມ ປະຈຳ ສປປ ລາວ ແລະ ຜ່ານສະຫາຍ ໄປຍັງ ຄະນະພັກ-ຄະນະນຳ ກະຊວງການຕ່າງປະເທດຫວຽດນາມ ກໍຄື ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ສາມາດຍາດໄດ້ ບັນດາຜົນສຳເລັດ ແລະ ຜົນງານທີ່ໃຫຍ່ຫຼວງ, ຮອບດ້ານ ຕະຫຼອດໄລຍະ 81 ປີ ຜ່ານມາ, ພາຍໃຕ້ການນຳພາອັນປີຊາສາມາດ ແລະ ຖືກຕ້ອງສະຫຼາດສ່ອງໃສຂອງ ພັກກອມມູນິດຫວຽດນາມ ອັນໄດ້ເຮັດໃຫ້ປະເທດຊາດຫວຽດນາມ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ ຢ່າງໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວໃນລະດັບສູງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນຢ່າງບໍ່ຢຸດຢັ້ງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ; ການພົວພັນຮ່ວມມືກັບຕ່າງປະເທດໄດ້ຮັບການເປີດກວ້າງ, ບົດບາດ ແລະ ອິດທິພົນຂອງພັກກອມມູນິດຫວຽດນາມ, ສສ ຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ພ້ອມທັງ ສະແດງຄວາມເຊື່ອໝັ້ນວ່າ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ຈະສືບຕໍ່ຍາດໄດ້ຜົນສຳເລັດອັນໃໝ່, ໃຫຍ່ຫຼວງກ່ວາເກົ່າ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ ວາງອອກຢ່າງມີໄຊ ເພື່ອສ້າງປະເທດຫວຽດນາມ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ຮັ່ງມີ, ວັດທະນະຖາວອນ, ສີວິໄລ, ຜາສຸກ ແລະ ກ້າວຂຶ້ນສູ່ສັງຄົມນິຍົມ ຢ່າງໜັກແໜ້ນ.

ສະຫາຍ ບຸນເຫຼືອ ພັນດານຸວົງ ຍັງໄດ້ສະແດງຄວາມເອກອ້າງທະນົງໃຈ ເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ໄດ້ຮັບການກໍ່ຕັ້ງໂດຍ ປະທານ ໂຮ່ຈິມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ຜູ້ນຳແສນເຄົາລົບຮັກ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຮັບການຖະນຸຖະໜອມ ແລະ ເພີ່ມພູນຄູນສ້າງ ຈາກບັນດາຮຸ່ນການນຳ ຂອງສອງປະເທດ ສືບຕໍ່ໄດ້ຮັບການເສີມສ້າງຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ນັບມື້ກ້າວເຂົ້າສູ່ລວງເລິກ ໃນທຸກຂົງເຂດວຽກງານ, ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ. ຕີລາຄາສູງ ແລະ ຊົມເຊີຍການປະຕິບັດໜ້າທີ່ຂອງ ສະຖານທູດຫວຽດນາມ ປະຈຳ ສປປ ລາວ ທີ່ໄດ້ເຮັດໜ້າທີ່ເປັນຂົວຕໍ່ ແລະ ເປັນເສນາທິການທີ່ດີໃຫ້ແກ່ ການພົວພັນສອງພັກ, ສອງປະເທດ ຕະຫຼອດໄລຍະຜ່ານມາ, ພ້ອມທັງສະແດງຄວາມຍິນດີຮ່ວມກັບ ສະຖານທູດ ແລະ ພາກສ່ວນກ່ຽວຂ້ອງຂອງ ຫວຽດນາມ ໃນການຊຸກຍູ້ການພົວພັນຮ່ວມມືຂອງ ສອງພັກ, ສອງປະເທດ ໃຫ້ມີປະສິດທິຜົນກວ່າເກົ່າ. ສະແດງຄວາມຂອບໃຈຕໍ່ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍ

ນ້ອງ ທີ່ໃຫ້ສະໜັບສະໜູນຊ່ວຍເຫຼືອຕໍ່ການປະຕິວັດລາວ ໃນພາລະກິດປົດປ່ອຍຊາດໃນເມື່ອກ່ອນ ກໍຄື ໃນພາລະກິດສ້າງສາ ແລະ ພັດທະນາປະເທດຊາດ ໃນປັດຈຸບັນ.

ສະຫາຍ ຫງວຽນ ມິງ ເຕິມ ໄດ້ສະແດງຄວາມຂອບໃຈຕໍ່ ສະຫາຍ ບຸນເຫຼືອ ພັນດານຸວົງ ທີ່ໄດ້ນໍາພາຄະນະ ມາອວຍພອນໃນຄັ້ງນີ້ ແລະ ໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງ ພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນປະຕິວັດລາວ ທີ່ນັບມື້ນັບກ້າວເຂົ້າສູ່ລວງເລິກ ແລະ ເປັນພື້ນຖານອັນສໍາຄັນ ໃຫ້ແກ່ການພົວພັນຮ່ວມມືໃນຂົງເຂດຕ່າງໆ ຂອງສອງປະເທດ, ພ້ອມທັງ ຕີລາຄາສູງຕໍ່ການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ສະຖານທູດຫວຽດນາມ ແລະ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໃນການເປັນຂົວເຊື່ອມຕໍ່ໃນການພົວພັນຮ່ວມມືແລະ ການເປັນເສນາທິການໃຫ້ແກ່ສອງພັກ, ສອງລັດ ລາວ-ຫວຽດນາມ, ອັນໄດ້ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນອັນເປັນມູນເຊື້ອ, ຄວາມສາມັກຄີອັນພິເສດ ລາວ-ຫວຽດນາມ. ພ້ອມນັ້ນ, ສະຫາຍ ຫງວຽນ ມິງ ເຕິມຢືນຢັນວ່າ ສະຖານທູດ ກໍຄື ກະຊວງການຕ່າງປະເທດຫວຽດນາມ ຈະສືບຕໍ່ປະສານສົມທົບຢ່າງແໜ້ນແຟ້ນກັບ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໃນການຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ບັນດາຂໍ້ຕົກລົງຂອງ ການນໍາຂັ້ນສູງສອງພັກ, ສອງລັດ ລາວ-ຫວຽດນາມ ໃຫ້ບັນລຸຕາມເປົ້າໝາຍ, ມີປະສິດທິຜົນສູງ, ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

**4. ຄະນະພົວພັນຕ່າງປະເທດສູນກາງພັກ ໄວ້ອາໄລຕໍ່ການຈາກໄປຂອງ ສະຫາຍ ໄຊສົມພອນ ພົມວິຫານ**





ວັນທີ 10 ສິງຫາ 2026, ທີ່ຫໍປະຊຸມແຫ່ງຊາດ, ຄະນະບໍລິຫານງານພັກ ຄະນະພົວພັນຕ່າງປະເທດສູນກາງພັກ ນໍາໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການສໍາຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນໍາພາພະນັກງານຫຼັກແຫຼ່ງ ເຂົ້າວາງພວງມາລາ ເພື່ອໄວ້ອາໄລ ເຖິງດວງວິນຍານຂອງ ສະຫາຍ ໄຊສົມພອນ ພົມວິຫານ, ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ທີ່ໄດ້ເຖິງແກ່ມໍລະນະກໍາ ໃນວັນທີ 08 ສິງຫາ 2026 ທີ່ຜ່ານມາ.

ສະຫາຍ ວາລະໄຊ ເລັ່ງສະຫວັດ, ໄດ້ຕາງໜ້າໃຫ້ ຄະນະບໍລິຫານງານພັກ, ພະນັກງານ-ລັດຖະກອນ ຄະນະພົວພັນຕ່າງປະເທດສູນກາງພັກ ຂຽນປຶ້ມໄວ້ອາໄລ ເພື່ອສະແດງຄວາມໂສກເສົ້າ ແລະ ອາໄລອາວອນຢ່າງສຸດຊຶ້ງ ຕໍ່ການຈາກໄປຂອງ ສະຫາຍ ໄຊສົມພອນ ພົມວິຫານ ຊຶ່ງເປັນການນໍາທີ່ມີຜົນງານອັນໃຫຍ່ຫຼວງ ແລະ ຄຸນງາມຄວາມດີຕໍ່ປະເທດຊາດ ແລະ ປະຊາຊົນລາວ.

ການຈາກໄປຂອງ ສະຫາຍ ໄຊສົມພອນ ພົມວິຫານ ຖືເປັນການສູນເສຍອັນຍິ່ງໃຫຍ່ຂອງ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ, ເປັນການສູນເສຍການນໍາຂັ້ນສູງ ຂອງສູນກາງພັກ ປປ ລາວ ທີ່ມີຜົນງານໂດດເດັ່ນ, ຕະຫຼອດຊີວິດຂອງເພິ່ນ ໄດ້ອຸທິດສະຕິປັນຍາ, ກໍາລັງແຮງ, ສາມັກຄີເປັນປຶກແຜ່ນ, ເສີມຂະຫຍາຍມູນເຊື້ອອັນອົງອາດສະຫງ່າຂອງພັກ, ຂອງຊາດ, ເດັດດ່ຽວຜັນຂະຫຍາຍແນວທາງປ່ຽນແປງໃໝ່ຂອງພັກ ເຂົ້າສູ່ລວງເລິກ ເພື່ອການພັດທະນາປະເທດຊາດ ແລະ ຄວາມຢູ່ດີກິນດີ ຂອງປະຊາຊົນລາວບັນດາເຜົ່າ.

## 5. ຄຕພ ຈັດກອງປະຊຸມສຳມະນາວິທະຍາສາດ ເພື່ອຮັບຕ້ອນວັນສຳຄັນທາງປະຫວັດສາດ ຂອງພັກ-ຂອງຊາດ




ວັນທີ 26 ສິງຫາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສຳມະນາວິທະຍາສາດ ພາຍໃຕ້ 2 ຫົວຂໍ້: "ກົດໝາຍສາກົນ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ" ແລະ "ວຽກງານພິທີການທູດສາຍພັກ", ເພື່ອຂໍ່ານັບຮັບຕ້ອນວັນສຳຄັນທາງປະຫວັດສາດ ຂອງພັກ-ຂອງຊາດ ຄື: ວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ (15 ສິງຫາ 1991 – 15 ສິງຫາ 2026) ແລະ ວັນຍຶດອຳນາດ ຄົບຮອບ 51 ປີ (23 ສິງຫາ 1975 - 23 ສິງຫາ 2026); ພາຍໃຕ້ການເປັນປະທານຂອງ ສະຫາຍ ສິງຫານະຄອນ ສີຫາລາດ, ປະທານຄະນະບໍລິຫານງານກຳມະບານ, ຄະນະພົວພັນຕ່າງປະເທດສູນກາງພັກ, ຫົວໜ້າຫ້ອງການ ຄຕພ; ພ້ອມດ້ວຍພະນັກງານ-ສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງໃນການຈັດກອງປະຊຸມສຳມະນາໃນຄັ້ງນີ້ ເພື່ອຍົກລະດັບຄວາມຮູ້ ແລະ ຄວາມເຂົ້າໃຈ ໃຫ້ແກ່ພະນັກງານ-ລັດຖະກອນ, ນັກຄົ້ນຄວ້າ ແລະ ຜູ້ເຂົ້າຮ່ວມ ກ່ຽວກັບ ເນື້ອໃນສຳຄັນຂອງສົນທິສັນຍາ ແລະ ກົດໝາຍ ທີ່ ສປປ ລາວ ເປັນພາຄີ ໃຫ້ເລິກເຊິ່ງຍິ່ງຂຶ້ນ ແລະ ເພື່ອຍົກສູງຄວາມຮັບຜິດຊອບທາງການເມືອງ ຕາມຄຳຂວັນຂອງຄະນະພົວພັນຕ່າງປະເທດສູນກາງພັກ ຄື: **"ຄິດເລິກ ເບິ່ງໄກ ໄປຖືກ"**. ພ້ອມທັງ, ເພີ່ມທະວີທັກສະວຽກງານພິທີການທູດ ເປັນຕົ້ນແມ່ນ ມາລະຍາດທາງສັງຄົມ ແລະ ມາລະຍາດທາງສາກົນ, ພິທີການຕ້ອນຮັບ, ການພົບປະສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ ໃຫ້ມີປະສິດທິພາບ ແລະ ຖືກຕ້ອງຕາມມາດຕະຖານສາກົນ.

ໃນກອງປະຊຸມ ສະຫາຍ ຫົງສາ ອິນທິລາດ, ຮອງຫົວໜ້າກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດ ໄດ້ບັນຍາຍ ແລະ ແລກປ່ຽນໃນຫົວຂໍ້ "ກົດໝາຍສາກົນ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ" ແລະ ສະຫາຍ ນາງ ບຸນມະນີເງິນ ສຸທຳມະວົງ, ຮັກສາການຫົວໜ້າພະແນກພິທີການ, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນບັນຍາຍໃນຫົວຂໍ້ "ວຽກງານພິທີການທູດສາຍພັກ". ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍ່ໄດ້ມີການຖາມ-ຕອບ, ແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ຢ່າງກວ້າງຂວາງ ເຊິ່ງເປັນການສ້າງຄວາມເຂົ້າໃຈ ແລະ ຄວາມຮັບຮູ້ ຢ່າງເລິກເຊິ່ງ ໃຫ້ແກ່ຜູ້ເຂົ້າຮ່ວມ ກໍຄື ສະມາຊິກພັກ-ພະນັກງານ ພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ.

ກອງປະຊຸມ ໄດ້ດຳເນີນໄປດ້ວຍບັນຍາກາດຄຶກຄື້ນ ແລະ ເຕັມໄປດ້ວຍການປຶກສາຫາລື ທີ່ເປັນປະໂຫຍດ. ຜ່ານການດຳເນີນກອງປະຊຸມເປັນເວລາເຄິ່ງວັນ, ກອງປະຊຸມໄດ້ຕີລາຄາສູງ ເຖິງຜົນສຳເລັດໃນຄັ້ງນີ້ ແລະ ໄດ້ປິດລົງຢ່າງຈົບງາມ ໃນຕອນທ່ຽງຂອງວັນດຽວກັນ.